ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ ໄຊສົມບູນ

ເລກທີ 08/ສພຂ.ຊບ

ໄຊສົມບູນ, ວັນທີ 13 ມັງກອນ 2024.

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນແຂວງ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2024

- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ກອງປະຊຸມສະໄໝສາມັນປະຈຳປີຂອງສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາປະຊາຊົນແຂວງ.

ຜ່ານການພິຈາລະນາ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກຂອງສະພາປະຊາຊົນແຂວງ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2024.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນແຂວງ ປະຈຳປີ 2023.**

1. ກອງປະຊຸມໄດ້ສະແດງຄວາມຊົມເຊີຍ ຕໍ່ສະພາປະຊາຊົນແຂວງ ທີ່ມີຄວາມພະຍາຍາມສູ້ຊົນ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ໄດ້ຈັດກອງປະຊຸມຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງກົດໝາຍ ໄດ້ 11 ສະບັບ (ສ້າງໃໝ່ 5 ສະບັບ, ປັບປຸງ 6 ສະບັບ); ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໄດ້ 11 ສະບັບ; ເຂົ້າຮ່ວມປະກອບຄຳເຫັນໃສ່ຮ່າງກົດໝາຍທີ່ສະພາແຫ່ງຊາດຈັດຂຶ້ນ ມີ 13 ສະບັບ; ຄົ້ນຄວ້າ, ພິຈາລະນາ ຮັບຮອງເອົາການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 2 ສະບັບ ສ້າງໃໝ່ 1 ສະບັບ, ປັບປຸງ 1 ສະບັບ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍ ສະເພາະຂອງຂະແໜງການ ມີ 13 ສະບັບ.

2. ຄົ້ນຄວ້າຕົກລົງບັນຫາບັນຫາສຳຄັນພື້ນຖານຂອງແຂວງ 141 ເນື້ອໃນ, ຮັບຮອງເອົາມະຕິ 32 ສະບັບ; ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍບຸກຄະລາກອນ 10 ທ່ານ, ຈັດຕັ້ງປະຕິບັດການປະເມີນ ແລະ ໃຫ້ຄະແນນ ຕໍ່ບຸກຄະລາກອນທີ່ສະພາປະຊາຊົນແຂວງ ຊຸດທີ II ເລືອກຕັ້ງ ແລະ ຮັບຮອງການແຕ່ງຕັ້ງຈຳນວນ 74 ທ່ານ, ຍິງ 11 ທ່ານ. ຜ່ານການປະເມີນ ໄດ້ປະເພດດີເລີດ 2 ທ່ານ, ປະເພດດີ 71 ທ່ານ, ຍິງ 11 ທ່ານ ແລະ ປະເພດກາງ 1 ທ່ານ.

3. ເອົາໃຈໃສ່ຕິດຕາມກວດກາການປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນແຂວງ ໂດຍຜ່ານການດຳເນີນກອງປະຊຸມສະພາປະຊາຊົນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ, ກອງປະຊຸມຮ່ວມ ກັບ ອົງການປົກຄອງແຂວງ, ອົງການແນວລາວສ້າງຊາດ ແລະ ລົງຕິດຕາມພາກສະໜາມ ລວມມີ 16 ຄັ້ງ; ພິຈາລະນາຄຳຮ້ອງຂໍຄວາມເປັນທຳ 10 ເລື່ອງ; ນຳສົ່ງຄຳສະເໜີ, ສາຍດ່ວນ ໃຫ້ພະແນກການ, ອົງການ, ກົມກອງ ລວມມີ 251 ເນື້ອໃນ.

4. ເຂົ້າຮ່ວມຝຶກອົບຮົມຍົກສູງຂີດຄວາມສາມາດທີ່ສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຂຶ້ນ ຢູ່ພາຍໃນ ແລະ ຕ່າງປະເທດ 11 ຄັ້ງ, ມີ 13 ຫົວຂໍ້; ຍາດແຍ່ງງົບປະມານ ຈາກສະພາແຫ່ງຊາດ ເພື່ອຈັດຝຶກອົບຮົມ ຍົກສູງທັກສະດ້ານການຂີດຂຽນເອກະສານ ແລະ ການກະກຽມວຽກງານຮອບດ້ານ ຮັບໃຊ້ກອງປະຊຸມສະພາປະຊາຊົນແຂວງ ໃຫ້ພະນັກງານຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແລະ ພະນັກງານສະພາປະຊາຊົນແຂວງຢູ່ແຂວງ, ເມືອງ.

5. ລົງພົບປະ ປະຊາຊົນຜູ້ມີສິດເລືອກຕັ້ງ ໄດ້ 254 ຈຸດ, 118 ບ້ານ, ມີຜູ້ເຂົ້າຮ່ວມທັງໝົດ 39.704 ຄົນ, ຍິງ 23.130 ຄົນ; ສົມທົບ ກັບ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ລະດົມທຶນຈາກພາກສ່ວນຕ່າງໆ ລວມເປັນເງິນ 697,5 ລ້ານກີບ.

6. ໄດ້ເຄື່ອນໄຫວວຽກງານຕ່າງປະເທດຮ່ວມ ກັບ ສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ ໄດ້ 9 ຄັ້ງ; ນຳສົ່ງພະນັກງານ-ລັດຖະກອນ ໄປບຳລຸງພາສາຫວຽດນາມ ຢູ່ແຂວງເງິນລາ ສສ ຫວຽດນາມ ຈຳນວນ 2 ທ່ານ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2024.**

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນການ ເຄື່ອນໄຫວວຽກງານ ປະຈຳປີ 2024 ດັ່ງນີ້:

1. ດ້ານນິຕິກຳ: ຄົ້ນຄວ້າ ປະກອບຄຳເຫັນຕໍ່ຮ່າງກົດໝາຍ 26 ສະບັບ ຕາມແຜນຂອງສະພາແຫ່ງຊາດ; ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 3 ສະບັບ, ປະເມີນ 3 ສະບັບ.

2. ການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ: ປີ 2024 ສະພາປະຊາຊົນແຂວງ ຈະໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເນື້ອໃນຕ່າງໆ ຜ່ານກົນໄກການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 7 ເທື່ອທີ 8 ຈຳນວນ 15 ເນື້ອໃນ, ຮັບຮອງເອົາ 11 ມະຕິ ຕາມມາດຕາ 59 ແລະ 60 ຂອງກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ຄື:

2.1 ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ມີເນື້ອໃນ ດັ່ງນີ້:

1) ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຂອງທ່ານເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນທ້າຍປີ 2024;
2) ພິຈາລະນາ ແລະ ຮັບຮອງເອົາ ການສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍຂອງແຂວງ ຈຳນວນ 2 ສະບັບ; ປະເມີນ 1 ສະບັບ;
3) ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ໃນລະຫວ່າງ ກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II;
4) ຮັບຟັງການລາຍງານຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງ ຄະນະປະຈຳສະພາປະຊາຊົນແຂວງ;
5) ຮັບຟັງການລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ແລະ ວຽກງານໃດໜຶ່ງ ຂອງອົງການປົກຄອງແຂວງ;
6) ຈັດຕັ້ງການປະເມີນ ແລະ ໃຫ້ຄະແນນ ຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນ ທີ່ຂຶ້ນລາຍງານ ແລະ ຕອບຄຳຊັກຖາມ ໃນກອງປະຊຸມສະພາປະຊາຊົນແຂວງ;
7) ພິຈາລະນາບັນຫາອື່ນໆ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ.

2.2 ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II ມີເນື້ອໃນດັ່ງນີ້:

1) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງທ່ານເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ໃນປີ 2025;
2) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຜົນຂອງການກວດສອບຄືນ ແລະ ບົດສະຫຼຸບງົບປະມານຂາດຕົວ ປະຈຳປີ 2024 ແລະ ແຜນການເຄື່ອນໄຫວ ປະຈຳປີ 2025 ຂອງອົງການກວດສອບປະຈຳພາກເໜືອ 1; ລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023;
3) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2025 ຂອງອົງການກວດກາລັດແຂວງ; ບົດລາຍງານຜົນການກວດກາ ຕາມຜົນຂອງການກວດສອບ ປະຈຳປີ 2022;
4) ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງຫົວໜ້າອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ;
5) ຮັບຟັງການລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ປີ 2024, ທິດທາງແຜນການ ປະຈຳປີ 2025 ແລະ ວຽກງານໃດໜຶ່ງ ຂອງອົງການປົກຄອງແຂວງ;
6) ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງສະພາປະຊາຊົນແຂວງ;
7) ຮັບຟັງການປະກອບຄຳເຫັນຂອງ ອົງການແນວລາວສ້າງຊາດແຂວງ ຕໍ່ການປະຕິບັດໜ້າທີ່ຂອງສະພາປະຊາຊົນແຂວງ;
8) ພິຈາລະນາ ແລະ ຮັບຮອງເອົາການສ້າງນິຕິກຳໃຕ້ກົດໝາຍຂອງແຂວງ 1 ສະບັບ;
9) ຈັດຕັ້ງການປະເມີນ ແລະ ໃຫ້ຄະແນນ ຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນ ທີ່ຂຶ້ນລາຍງານ ແລະ ຕອບຄຳຊັກຖາມ ໃນກອງປະຊຸມສະພາປະຊາຊົນແຂວງ;
10) ພິຈາລະນາບັນຫາອື່ນໆ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ.

3. ການຕິດຕາມກວດກາ: ສຸມໃສ່ຕິດຕາມກວດກາ ການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເປັນຕົ້ນ: ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ໂຄງການລົງທຶນທີ່ຈັດຕັ້ງປະຕິບັດຫຼ້າຊ້າ, ຫຍຸ້ງຍາກສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ການດຳລົງຊີວິດຂອງປະຊາຊົນ; ຕິດຕາມກວດກາແຜນການເຄື່ອນໄຫວຂອງສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດສອບປະຈຳພາກເໜືອ, ອົງການກວດກາລັດແຂວງ, ອົງການສືບສວນ-ສອບສວນ ແລະ ຂອງສະພາປະຊາຊົນແຂວງ ໂດຍຜ່ານກົນໄກການດຳເນີນກອງປະຊຸມສະພາປະຊາຊົນແຂວງ, ການລົງຕິດຕາມຕົວຈິງຢູ່ບັນດາເມືອງ ແລະ ພາກສະໜາມ; ຊຸກຍູ້ການຈັດຕັ້ງປະຕິບັດພາລະບົດບາດ, ສິດໜ້າທີ່ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ; ຕິດຕາມຜ່ານກົນໄກການຮັບ, ພິຈາລະນາ, ແກ້ໄຂຄຳສະເໜີ, ສາຍດ່ວນ, ຄຳຮ້ອງຂໍຄວາມເປັນທຳ; ສືບຕໍ່ຕ້ອນຮັບ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ປະຊາຊົນ; ຕິດຕາມຜ່ານກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ, ຄະນະປະຈຳແນວລາວສ້າງຊາດ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດກາລັດແຂວງ ແລະ ບັນດາຄະນະກຳມະການ, ຄະນະເລຂາທິການ ກັບ ພະແນກການ, ອົງການ, ກົມກອງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ກັບ ອົງການປົກຄອງເມືອງ.

4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ: ປັບປຸງກົງຈັກການຈັດຕັ້ງ ພາຍໃນສະພາປະຊາຊົນແຂວງ, ບັນຈຸຊັບຊ້ອນບຸກຄະລາກອນ ເຂົ້າໃນຕຳແໜ່ງງານໃຫ້ເໝາະສົມ; ບຳລຸງຍົກລະດັບທາງດ້ານວິຊາສະເພາະ, ທິດສະດີການເມືອງ-ການປົກຄອງ ຢູ່ພາຍໃນ-ຕ່າງປະເທດ ໃຫ້ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; ເຂົ້າຮ່ວມກອງປະຊຸມຝຶກອົບຮົມຫົວຂໍ້ຕ່າງໆ ຕາມແຜນຂອງສະພາແຫ່ງຊາດ, ຍາດແຍ່ງງົບປະມານຈາກສະພາແຫ່ງຊາດ, ອົງການປົກຄອງແຂວງ ເພື່ອຈັດຝຶກອົບຮົມໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ບຸກຄະລາກອນ ຂອງແຂວງ ແລະ ພະນັກງານຊ່ວຍວຽກຂອງສະພາປະຊາຊົນແຂວງ, ເມືອງ ໃຫ້ໄດ້ 1 ຄັ້ງ; ເພີ່ມທະວີການປະສານງານ ກັບ ອົງການປົກຄອງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການກວດສອບປະຈຳພາກເໜືອ 1, ອົງການກວດກາລັດແຂວງ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ວຽກງານມີຄຸນນະພາບ, ສາມາດກວດສອບໄດ້ຄວາມຖືກຕ້ອງທາງດ້ານກົດໝາຍ; ສ້າງເງື່ອນໄຂຊຸກຍູ້ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ພົບປະແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ; ສືບຕໍ່ປະສານສົມທົບສະພາປະຊາຊົນແຂວງໃດໜຶ່ງ ເພື່ອພົບປະແລກປ່ຽນບົດຮຽນກ່ຽວກັບວຽກງານສະພາປະຊາຊົນແຂວງ.

5. ການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ: ຊຸກຍູ້ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ເຄື່ອນໄຫວຕາມພາລະບົດບາດ, ສິດໜ້າທີ່ ເປັນຕົ້ນແມ່ນ: ການຮ່າງນິຕິກຳຂອງອົງການປົກຄອງເມືອງ, ການໃຫ້ຄຳປຶກສາທາງດ້ານກົດໝາຍ, ການປະສານສົມທົບກັບ ອົງການປົກຄອງເມືອງ ກະກຽມເນື້ອໃນກ່ອນເຂົ້າຮ່ວມກອງປະຊຸມສະພາປະຊາຊົນແຂວງແຕ່ລະຄັ້ງ, ການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ, ການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ ຢູ່ເຂດເລືອກຕັ້ງຕົນ; ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ແລະ ເທື່ອທີ 7 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຕິດພັນກັບການເກັບກຳບັນຫາຕ່າງໆຂອງຜູ້ມີສິດເລືອກຕັ້ງ, ວິເຄາະ, ວິໃຈ ຄຳເຫັນ ຂອງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ເພື່ອສົມທົບກັບອົງການປົກຄອງແຂວງ, ເມືອງ ແກ້ໄຂຄຳສະເໜີ ແລ້ວລາຍງານໄປຍັງຄະນະປະຈຳສະພາປະຊາຊົນແຂວງ.

6. ການເຄື່ອນໄຫວວຽກງານການຕ່າງປະເທດ:ເພີ່ມທະວີການຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ, ເຄື່ອນໄຫວຕາມແຜນຂອງສະພາແຫ່ງຊາດ, ອົງການປົກຄອງແຂວງ ເພື່ອເສີມຂະຫຍາຍສາຍພົວພັນການຮ່ວມມື ກັບບັນດາປະເທດເພື່ອນມິດຍຸດທະສາດ; ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ 7, ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ ເຂົ້າຮ່ວມເຄື່ອນໄຫວ ກັບລັດຖະສະພາປະເທດເພື່ອນມິດ, ພາກພື້ນ ແລະ ສາກົນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງເມືອງ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ